ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ 329 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 18 ມິຖຸນາ 2024

# ຂໍ້ຕົກລົງ
# ວ່າດ້ວຍຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ

- ອີງຕາມ ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ສະບັບເລກທີ 75/ສພຊ, ລົງວັນທີ 26 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ ສະບັບເລກທີ 601/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມກົດໝາຍ ກະຊວງຍຸຕິທຳ ສະບັບເລກທີ 98/ກກໝ, ລົງວັນທີ 5 ມິຖຸນາ 2024.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນ ໃຫ້ໄດ້ຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ມີຄວາມຮູ້ ຄວາມສາມາດ ແລະ ຊຳນານງານ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 2 ຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນ ແມ່ນ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບໃນການ ຄວບຄຸມ, ຄຸ້ມຄອງ ແລະ/ຫຼື ບໍລິຫານຊັບສິນຂອງວິສາຫະກິດລູກໜີ້ ແລະ ຊຳລະສະສາງ.

ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ແມ່ນວິສາຫະກິດທີ່ມີເງື່ອນໄຂ ແລະ ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວໃຫ້ບໍລິການຄວບຄຸມຊັບສິນ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ.

## ໝວດທີ 2
## ການເປັນຜູ້ຄວບຄຸມຊັບສິນ

**ມາດຕາ 4 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ຄວບຄຸມຊັບສິນ**

ບຸກຄົນ ທີ່ຈະເປັນຜູ້ຄວບຄຸມຊັບສິນ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີລະດັບການສຶກສາດ້ານ ກົດໝາຍ, ການບັນຊີ, ການກວດສອບ ຫຼື ການບໍລິຫານທຸລະກິດ ຊັ້ນປະລິນຍາຕີ ຂຶ້ນໄປ ແລະ ໄດ້ຜ່ານວຽກງານໃນດ້ານດັ່ງກ່າວ ຢ່າງໜ້ອຍ ສາມປີ;
2. ໄດ້ຜ່ານການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;
3. ບໍ່ແມ່ນ ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ຍັງປະຕິບັດໜ້າທີ່ຢູ່;
4. ບໍ່ເຄີຍ ຖືກວິໄນໃຫ້ອອກຈາກລັດຖະການ ຫຼື ຖືກສານຕັດສິນ ລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດ ໂດຍເຈດຕະນາ;
5. ມີສຸຂະພາບດີ.

**ມາດຕາ 5 ການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ**

ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂໍ້ 1, 3, 4 ແລະ 5 ຂອງຂໍ້ຕົກລົງສະບັບນີ້ ທີ່ມີຈຸດປະສົງຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ໃຫ້ຍື່ນຄຳຮ້ອງຕາມແບບພິມກຳນົດ ຕໍ່ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ. ສະຖາບັນຍຸຕິທຳແຫ່ງຊາດ ດຳເນີນການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ຕາມການອະນຸມັດຂອງລັດຖະມົນຕີກະຊວງຍຸຕິທຳ.

ພາຍຫຼັງສຳເລັດການຝຶກອົບຮົມ ສະຖາບັນຍຸຕິທຳແຫ່ງຊາດ ຕ້ອງອອກໃບຢັ້ງຢືນ ໃຫ້ຜູ້ສຳເລັດການຝຶກອົບຮົມ.

**ມາດຕາ 6 ການຂໍເປັນຜູ້ຄວບຄຸມຊັບສິນ**

ຜູ້ສຳເລັດການຝຶກອົບຮົມ ທີ່ມີຈຸດປະສົງ ເປັນຜູ້ຄວບຄຸມຊັບສິນ ໃຫ້ຍື່ນຄຳຮ້ອງຂໍ ແລະ ເອກະສານປະກອບ ຕໍ່ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ກະຊວງຍຸຕິທຳ ເພື່ອຄົ້ນຄວ້າ ແລະ ພິຈາລະນາ.

ເອກະສານປະກອບການຂໍອະນຸຍາດ ມີ ດັ່ງນີ້:

1. ຄຳຮ້ອງ;
2. ຊີວະປະຫວັດຫຍໍ້;
3. ປະກາສະນີຍະບັດ ແລະ ໃບຢັ້ງຢືນການຜ່ານງານ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້;
4. ໃບຢັ້ງຢືນການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;
5. ໃບແຈ້ງໂທດ ເລກ 3;
6. ໃບຢັ້ງຢືນສຸຂະພາບ;
7. ຮູບຖ່າຍ ຂະໜາດ 4x6 ຖ່າຍ ບໍ່ເກີນ ຫົກເດືອນ ຈຳນວນ 4 ໃບ.

**ມາດຕາ 7 ການພິຈາລະນາອະນຸຍາດ**

ພາຍຫຼັງໄດ້ຮັບຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງຄົ້ນຄວ້າ ພາຍໃນເວລາ ຊາວວັນ ແລ້ວສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາອະນຸຍາດ ເປັນຜູ້ຄວບຄຸມຊັບສິນ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍ.

**ມາດຕາ 8 ບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ**

ບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ແມ່ນ ເອກະສານ ທີ່ສັງລວມລາຍຊື່ ແລະ ຂໍ້ມູນຂອງຜູ້ທີ່ໄດ້ຮັບອະນຸຍາດ ເປັນຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນຜູ້ສັງລວມ ບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ພ້ອມທັງເຜີຍແຜ່ໃຫ້ສັງຄົມ ຜ່ານສື່ສິ່ງພິມຕ່າງໆ ແລະ ເປັນຂໍ້ມູນໃຫ້ສານປະຊາຊົນ ໃນການພິຈາລະນາ ແຕ່ງຕັ້ງຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດໃດໜຶ່ງ.

ບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ຕ້ອງປັບປຸງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ມີການອະນຸຍາດ ເປັນຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ແຕ່ລະຄັ້ງ, ການສິ້ນສຸດ ການເປັນຜູ້ຄວບຄຸມຊັບສິນ ຫຼື ຖືກຖອນໃບອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນຂອງວິສາຫະກິດ ລວມທັງການປ່ຽນແປງຂໍ້ມູນຂອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ.

**ມາດຕາ 9 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນ ມີ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;
2. ກວດກາ, ລວບລວມ ແລະ ຂຶ້ນບັນຊີ ຊັບສິນທັງໝົດຂອງວິສາຫະກິດລູກໜີ້;
3. ສັງລວມໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງຮັບທັງໝົດຂອງວິສາຫະກິດລູກໜີ້ ພ້ອມທັງສ້າງບັນຊີລາຍຊື່ເຈົ້າໜີ້, ລູກໜີ້ ແລະ ຈຳນວນໜີ້ ຕ້ອງສົ່ງ ແລະ ໜີ້ຕ້ອງຮັບ;
4. ກວດສອບສະຖານະທາງດ້ານການເງິນຂອງວິສາຫະກິດລູກໜີ້ ແລ້ວລາຍງານ ຕໍ່ສານປະຊາຊົນ ແລະ ກອງປະຊຸມເຈົ້າໜີ້;
5. ຊ່ວຍວິສາຫະກິດລູກໜີ້ ໃນການປະສານງານ, ຮ່າງ ແລະ ເຈລະຈາ ຂໍ້ສະເໜີແກ້ໄຂໜີ້ສິນ ສຳລັບການຟື້ນຟູ ວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ;
6. ມີຄຳເຫັນຕໍ່ແຜນຟື້ນຟູວິສາຫະກິດ ຫຼື ກະກຽມແຜນຟື້ນຟູວິສາຫະກິດ ຕາມການຮ້ອງຂໍຂອງວິສາຫະກິດລູກໜີ້ ຫຼື ເຈົ້າໜີ້ ລວມທັງການຊ່ວຍຊອກຫາແຫຼ່ງທຶນ ເພື່ອນຳໃຊ້ເຂົ້າໃນການຟື້ນຟູວິສາຫະກິດ;
7. ຕິດຕາມ ກວດກາການດຳເນີນທຸລະກິດຂອງວິສາຫະກິດລູກໜີ້ ຫຼື ຄຸ້ມຄອງ, ບໍລິຫານວິສາຫະກິດລູກໜີ້ ໃນກໍລະນີຜູ້ບໍລິຫານວິສາຫະກິດລູກໜີ້ ບໍ່ໄດ້ຮັບຄວາມເຊື່ອໝັ້ນ ຈົນກວ່າມີຜູ້ບໍລິຫານໃໝ່ ປ່ຽນແທນ;
8. ຕົກລົງ ກ່ຽວກັບການນຳໃຊ້ຊັບສິນ ແລະ ການໃຊ້ຈ່າຍຂອງວິສາຫະກິດລູກໜີ້ ຕາມແຜນການທີ່ສານປະຊາຊົນ ອະນຸມັດ;
9. ກວດກາສິດທວງ ແລະ ມູນຄ່າສິດທວງຂອງເຈົ້າໜີ້;
10. ສ້າງແຜນຊຳລະສະສາງຊັບສິນ ແລະ ໜີ້ສິນຂອງວິສາຫະກິດລູກໜີ້ ໃນຄະດີລົ້ມລະລາຍ;
11. ສະເໜີສານປະຊາຊົນ ພິຈາລະນານຳໃຊ້ມາດຕະການ ເພື່ອປົກປັກຮັກສາຊັບສິນຂອງວິສາຫະກິດລູກໜີ້;
12. ຮຽກ ແລະ ກຽມ ຈັດກອງປະຊຸມເຈົ້າໜີ້;
13. ປະກັນໄພຄວາມຮັບຜິດຊອບດ້ານວິຊາຊີບຄວບຄຸມຊັບສິນ ໂດຍສອດຄ່ອງກັບກົດໝາຍ;

14. ເສຍພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ;

15. ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ສານປະຊາຊົນ ແລະ ກອງປະຊຸມເຈົ້າໜີ້ ເປັນແຕ່ລະໄລຍະ;

16. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ກະຊວງຍຸຕິທຳ ຕາມລະບຽບການ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ຄວບຄຸມຊັບສິນ ຕ້ອງເຄື່ອນໄຫວວຽກງານຂອງຕົນ ດ້ວຍຄວາມເອົາໃຈໃສ່, ຄວາມບໍລິສຸດໃຈ, ຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງຂອງສານປະຊາຊົນ ແລະ ມີຄວາມຮັບຜິດຊອບຕໍ່ການເຄື່ອນໄຫວວຽກງານຂອງຕົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ກົດໝາຍອື່ນ ຊຶ່ງພາໃຫ້ມີຄວາມເສຍຫາຍເກີດຂຶ້ນ ລວມທັງຖືກດຳເນີນຄະດີ ຕາມກົດໝາຍ.

**ມາດຕາ 10 ຈັນຍາບັນຂອງຜູ້ຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນທຸກຄົນ ຕ້ອງເຄື່ອນໄຫວວິຊາຊີບຂອງຕົນ ດ້ວຍຄວາມ ໂປ່ງໃສ, ສັດຊື່, ບໍລິສຸດໃຈ, ທ່ຽງທຳ, ຖືຜົນປະໂຫຍດຂອງວິສາຫະກິດລູກໜີ້ ແລະ/ຫຼື ເຈົ້າໜີ້ ເປັນຫຼັກ, ຮັກສາຄວາມລັບຂອງວິສາຫະກິດລູກໜີ້, ເຈົ້າໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ, ປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 11 ການສິ້ນສຸດການເປັນຜູ້ຄວບຄຸມຊັບສິນ**

ການເປັນຜູ້ຄວບຄຸມຊັບສິນ ຈະສິ້ນສຸດລົງ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ລາອອກຈາກການເປັນຜູ້ຄວບຄຸມຊັບສິນ;

2. ຖືກບັນຈຸເປັນ ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ພາຍຫຼັງໄດ້ຮັບໃບອະນຸຍາດ;

3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;

4. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການປະຕິບັດໜ້າທີ່ຂອງຜູ້ຄວບຄຸມຊັບສິນ ທີ່ມີລັກສະນະຮ້າຍແຮງ;

5. ເສຍຊີວິດ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນຜູ້ຄົ້ນຄວ້າ ແລ້ວສະເໜີລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາໃຫ້ສິ້ນສຸດການເປັນຜູ້ຄວບຄຸມຊັບສິນ ຍົກເວັ້ນການເສຍຊີວິດ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງລຶບຊື່ຜູ້ຄວບຄຸມຊັບສິນນັ້ນ ອອກຈາກບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ.

**ມາດຕາ 12 ການປະກັນໄພຄວາມຮັບຜິດຊອບດ້ານວິຊາຊີບ**

ຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ທີ່ໄດ້ຮັບການແຕ່ງຕັ້ງຈາກສານປະຊາຊົນ ໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ຕ້ອງປະກັນໄພຄວາມເສຍຫາຍດ້ານວິຊາຊີບ ເພື່ອຄໍ້າປະກັນການເສຍຫາຍໃດໜຶ່ງທີ່ອາດຈະເກີດຂຶ້ນ ໃນເວລາປະຕິບັດຂໍ້ຜູກພັນດ້ານວິຊາຊີບຂອງຕົນ ແລະ ຕ້ອງສົ່ງສຳເນົາສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບ ໃຫ້ສານປະຊາຊົນ.

**ມາດຕາ 13 ການໂຈະການປະຕິບັດໜ້າທີ່ຜູ້ຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນ ຈະຖືກໂຈະການປະຕິບັດໜ້າທີ່ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຖືກກ່າວຫາວ່າ ມີການກະທຳຜິດທາງອາຍາໂດຍເຈດຕະນາ ຊຶ່ງກົດໝາຍໄດ້ກຳນົດໂທດຕັດອິດສະລະພາບແຕ່ ສາມເດືອນ ຂຶ້ນໄປ;

2. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຄົ້ນຄວ້າ ກ່ຽວກັບການໂຈະການປະຕິບັດໜ້າທີ່ຂອງຜູ້ຄວບຄຸມຊັບສິນ ສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາໂຈະ ແລ້ວແຈ້ງລາຍຊື່ຜູ້ຄວບຄຸມຊັບສິນນັ້ນ ໃຫ້ສານປະຊາຊົນ ເພື່ອບໍ່ແຕ່ງຕັ້ງໃຫ້ຮັບຜິດຊອບ ຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

## ໝວດທີ 3
## ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ

### ມາດຕາ 14 ເງື່ອນໄຂຂອງວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ

ວິສາຫະກິດ ທີ່ມີຈຸດປະສົງ ໃຫ້ບໍລິການຄວບຄຸມຊັບສິນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຂຶ້ນທະບຽນວິສາຫະກິດ ນຳຂະແໜງອຸດສາຫະກຳ ແລະ ການຄ້າ ຢ່າງຖືກຕ້ອງຕາມກົດໝາຍ;
2. ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;
3. ມີຜູ້ຄວບຄຸມຊັບສິນຢ່າງໜ້ອຍ ໜຶ່ງຄົນ.

### ມາດຕາ 15 ເອກະສານປະກອບຂໍອະນຸຍາດໃຫ້ບໍລິການຄວບຄຸມຊັບສິນ

ເອກະສານປະກອບຂໍອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;
4. ສຳເນົາສັນຍາແຮງງານ ລະຫວ່າງ ຜູ້ຄວບຄຸມຊັບສິນ ກັບວິສາຫະກິດ;
5. ສຳເນົາຂໍ້ຕົກລົງອະນຸຍາດ ໃຫ້ເປັນຜູ້ຄວບຄຸມຊັບສິນ.

### ມາດຕາ 16 ການຍື່ນຄຳຮ້ອງຂໍອະນຸຍາດໃຫ້ບໍລິການຄວບຄຸມຊັບສິນ

ວິສາຫະກິດ ທີ່ມີຈຸດປະສົງ ໃຫ້ບໍລິການຄວບຄຸມຊັບສິນ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຕໍ່ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ກະຊວງຍຸຕິທຳ.

### ມາດຕາ 17 ການພິຈາລະນາການຂໍໃຫ້ບໍລິການຄວບຄຸມຊັບສິນ

ພາຍຫຼັງໄດ້ຮັບຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງຄົ້ນຄວ້າ ພາຍໃນເວລາ ສິບວັນ ແລ້ວສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາອອກໃບອະນຸຍາດໃຫ້ບໍລິການຄວບຄຸມຊັບສິນ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍ.

### ມາດຕາ 18 ສິດ ແລະ ພັນທະຂອງວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ

ໃນການໃຫ້ບໍລິການຄວບຄຸມຊັບສິນ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ມີ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຄືກັບຜູ້ຄວບຄຸມຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ແລ້ວ, ນອກຈາກນັ້ນຍັງມີ ພັນທະ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;
2. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

3. ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ ທີ່ຕົນໄດ້ມອບໝາຍ ໃນການປະຕິບັດໜ້າທີ່;

4. ຮັບຜິດຊອບ ກວດກາ ແລະ ລົງລາຍເຊັນ ໃນທຸກເອກະສານທີ່ກະກຽມໂດຍຜູ້ຄວບຄຸມຊັບສິນ;

5. ປະກັນໄພຄວາມຮັບຜິດຊອບດ້ານວິຊາຊີບຄວບຄຸມຊັບສິນ ໃຫ້ຜູ້ຄວບຄຸມຊັບສິນ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ການໂຈະໃບອະນຸຍາດ**

ໃບອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນຂອງວິສາຫະກິດ ຈະຖືກໂຈະ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະການດຳເນີນທຸລະກິດ ໂດຍວິສາຫະກິດເອງ;
2. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຊັບສິນ ທີ່ມີລັກສະນະບໍ່ຮ້າຍແຮງ;
3. ບໍ່ເສຍພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ;
4. ກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຄົ້ນຄວ້າ ກ່ຽວກັບການໂຈະການໃຫ້ບໍລິການຄວບຄຸມຊັບສິນຂອງວິສາຫະກິດ ເພື່ອສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາໂຈະ ແລ້ວແຈ້ງໃຫ້ສານປະຊາຊົນ ເພື່ອບໍ່ແຕ່ງຕັ້ງໃຫ້ຮັບຜິດຊອບ ຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 20 ການຖອນໃບອະນຸຍາດ**

ໃບອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນ ຈະຖືກຖອນ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນເອງ;
2. ບໍ່ປັບປຸງ ຫຼື ແກ້ໄຂ ຕາມການແຈ້ງໂຈະ;
3. ຂາຍ, ມອບ, ໂອນ ຫຼື ເອົາ ໃບອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນ ໃຫ້ຜູ້ອື່ນນຳໃຊ້;
4. ມີຄຳຕັດສິນຂອງສານປະຊາຊົນ ໃຫ້ຢຸດເຊົາ ການໃຫ້ບໍລິການຄວບຄຸມຊັບສິນ ຫຼື ຍຸບເລີກວິສາຫະກິດ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນຜູ້ຄົ້ນຄວ້າ ແລ້ວສະເໜີລັດຖະມົນຕີກະຊວງຍຸຕິທຳ ຖອນໃບອະນຸຍາດ ໃຫ້ບໍລິການຄວບຄຸມຊັບສິນ ແລ້ວແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍ.

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງລຶບຊື່ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນນັ້ນ ອອກຈາກບັນຊີຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ.

## ໝວດທີ 4
## ຄ່າແຮງງານ ແລະ ຄ່າໃຊ້ຈ່າຍ

**ມາດຕາ 21 ຄ່າແຮງງານ**

ຄ່າແຮງງານ ແມ່ນຄ່າຕອບແທນການເຮັດວຽກ ຂອງຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ທີ່ຖືກແຕ່ງຕັ້ງຈາກສານປະຊາຊົນ ໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ຊຶ່ງວິສາຫະກິດລູກໜີ້ເປັນຜູ້ຮັບຜິດຊອບ ໂດຍຈ່າຍ ເປັນລາຍເດືອນ, ລາຍວັນ, ລາຍຊົ່ວໂມງ ຫຼື ແບບມອບເໝົາ ຕາມການກຳນົດຂອງສານປະຊາຊົນ ບົນພື້ນຖານການເຫັນດີຂອງກອງປະຊຸມເຈົ້າໜີ້.

ການຄິດໄລ່ຄ່າແຮງງານ ໃຫ້ອີງໃສ່ພື້ນຖານ ດັ່ງນີ້:

1. ໄລຍະເວລາປະຕິບັດໜ້າທີ່;
2. ລະດັບຄວາມຫຍຸ້ງຍາກຂອງຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ;

3. ຜົນໄດ້ຮັບຈາກການປະຕິບັດໜ້າທີ່.

**ມາດຕາ 22 ຄ່າໃຊ້ຈ່າຍ**

ຄ່າໃຊ້ຈ່າຍ ແມ່ນຈຳນວນເງິນທີ່ໃຊ້ຈ່າຍເຂົ້າໃນການບໍລິຫານແຜນວຽກຂອງຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ໂດຍແມ່ນວິສາຫະກິດລູກໜີ້ ເປັນຜູ້ຮັບຜິດຊອບຕາມການເຫັນດີຂອງກອງປະຊຸມເຈົ້າໜີ້.

ຄ່າໃຊ້ຈ່າຍ ອາດຈະປະກອບດ້ວຍ:

1. ຄ່າທຳນຽມສານ ເຊັ່ນ ເງິນວາງສານ, ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມ, ຄ່າເອກະສານ ແລະ ຄ່າອື່ນ ຕາມກົດໝາຍວ່າດ້ວຍຄ່າທຳນຽມສານ;
2. ຄ່າບໍລິຫານ ແລະ ຄ່າດຳເນີນການໃນການຊຳລະສະສາງ ເປັນຕົ້ນ ການໂອນກຳມະສິດ, ການປະມູນຂາຍຊັບສິນ;
3. ຄ່າໃຊ້ຈ່າຍໃນການປະຕິບັດໜ້າທີ່ ເປັນຕົ້ນ ເດີນທາງ, ກິນຢູ່, ພັກເຊົາ, ຄ່າຈ້າງພະນັກງານ.

ຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ຕ້ອງກຳນົດຄ່າໃຊ້ຈ່າຍຂອງຕົນຢ່າງລະອຽດ ໂດຍສອດຄ່ອງກັບການປະຕິບັດໜ້າທີ່ຕົວຈິງ ແລ້ວນຳສະເໜີຕໍ່ກອງປະຊຸມເຈົ້າໜີ້.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມສຳລັບຜູ້ຄວບຄຸມຊັບສິນ**

ຫ້າມ ຜູ້ຄວບຄຸມຊັບສິນ ມີ ພຶດຕິກຳ ດັ່ງນີ້:

1. ເຮັດວຽກໃຫ້ສອງ ຫຼື ຫຼາຍ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ພ້ອມກັນ;
2. ຊຸກເຊື່ອງ, ປອມແປງ ຫຼື ທຳລາຍ ເອກະສານ ຂໍ້ມູນຂອງວິສາຫະກິດລູກໜີ້ ຫຼື ເຈົ້າໜີ້;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ຫຼື ນຳໃຊ້ຂໍ້ມູນຂອງວິສາຫະກິດລູກໜີ້ ຫຼື ເຈົ້າໜີ້ ໂດຍບໍ່ໄດ້ຮັບອະນຸຍາດ;
4. ນຳໃຊ້ຊັບສິນຂອງວິສາຫະກິດລູກໜີ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສານ ຫຼື ກອງປະຊຸມເຈົ້າໜີ້;
5. ຮຽກເອົາ ຫຼື ຮັບເອົາຜົນປະໂຫຍດຈາກວິສາຫະກິດລູກໜີ້ ຫຼື ເຈົ້າໜີ້ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ຈັນຍາບັນ.

**ມາດຕາ 24 ຂໍ້ຫ້າມສຳລັບວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ**

ນອກຈາກຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2, 3, 4 ແລະ ຂໍ້ 5 ຂອງມາດຕາ 23 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງຫ້າມວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ມີ ພຶດຕິກຳ ດັ່ງນີ້:

1. ວ່າຈ້າງຜູ້ຄວບຄຸມຊັບສິນ ທີ່ສັງກັດຢູ່ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນອື່ນ;
2. ເອົາໃບອະນຸຍາດໃຫ້ບໍລິການຄວບຄຸມຊັບສິນຂອງຕົນ ໃຫ້ຜູ້ອື່ນນຳໃຊ້;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ຈັນຍາບັນ.

## ໝວດທີ 6
## ຄວາມຮັບຜິດຊອບໃນການຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ

**ມາດຕາ 25 ຄວາມຮັບຜິດຊອບຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ**

ໃນການຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າສ້າງ ກົດຈັບຍາບັນ, ກຳນົດແບບພິມ ແລະ ບັນຊີລາຍຊື່ຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ;

2. ຄົ້ນຄວ້າຄຳຮ້ອງ ຂໍເປັນຜູ້ຄວບຄຸມຊັບສິນ ແລະ ໃຫ້ບໍລິການຄວບຄຸມຊັບສິນຂອງວິສາຫະກິດ ເພື່ອສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ;

3. ປະເມີນ ແລະ ຕິດຕາມ ກວດກາການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ;

4. ຄົ້ນຄວ້າ ແລະ ສະເໜີລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາ ອະນຸຍາດ, ໂຈະ ແລະ ສິ້ນສຸດການເປັນຜູ້ຄວບຄຸມຊັບສິນ;

5. ຄົ້ນຄວ້າ ແລະ ສະເໜີລັດຖະມົນຕີກະຊວງຍຸຕິທຳ ເພື່ອພິຈາລະນາ ອອກ, ໂຈະ ແລະ ຖອນ ໃບອະນຸຍາດໃຫ້ບໍລິການຄວບຄຸມຊັບສິນຂອງວິສາຫະກິດ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ຕໍ່ລັດຖະມົນຕີກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 26 ຄວາມຮັບຜິດຊອບຂອງສະຖາບັນຍຸຕິທຳແຫ່ງຊາດ**

ໃນການຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ວິສາຫະກິດໃຫ້ບໍລິການຄວບຄຸມຊັບສິນ ສະຖາບັນຍຸຕິທຳແຫ່ງຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ຫຼັກສູດ ແລະ ປຶ້ມຕຳລາ ຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ເພື່ອສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາຮັບຮອງ;

2. ປະສານສົມທົບກັບກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກຳນົດເປົ້າໝາຍ, ເງື່ອນໄຂຂອງຜູ້ທີ່ຈະເຂົ້າຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;

3. ດຳເນີນການຝຶກອົບຮົມ, ປະເມີນ ແລະ ສອບເສັງຈົບຫຼັກສູດການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;

4. ອອກໃບຢັ້ງຢືນການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;

5. ສົ່ງບັນຊີລາຍຊື່ຜູ້ສຳເລັດການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ;

6. ພົວພັນ ແລະ ຮ່ວມມື ກັບສະຖາບັນການສຶກສາ ທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານ ການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ ຕໍ່ລັດຖະມົນຕີກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ແລະ ສະຖາບັນຍຸຕິທຳແຫ່ງຊາດ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາກົມ, ຫ້ອງການ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ໃນວັນທີ 1 ພຶດສະພາ 2024 ເປັນຕົ້ນໄປ.

ລັດຖະມົນຕີ

ໄພວີ ສີບົວລີພາ